ຄົນເຮົາແຕ່ລະຄົນແມ່ນຕ້ອງມີອະດີດແຫ່ງຄວາມຮັກ ບາງຄົນກໍຜິດຫວັງ ແລະບາງຄົນກໍສົມຫວັງ. ແຕ່ຊີວິດກໍດຳເນີນສືບຕໍ່ໄປ. ຄວາມຮັກແທ້ນັ້ນ ຕ້ອງອົດທົນ ແລະປາດຖະໜາຢາກໃຫ້ຜູ້ທີ່ຕົນຮັກນັ້ນ ເຕັມໄປດ້ວຍຄວາມສຸກ ສົດຊື່ນ ແລະສົມຫວັງ. ຄວາມຮັກ ຈະບໍ່ຫວັງທຳລາຍ ມີແຕ່ກໍ່ສ້າງໃຫ້ຈະເຣີນ. ແຕ່ເພື່ອຄວາມແບ່ງເບົາໃນຊີວິດ ຄົນເຮົາຕ້ອງຊອກວິທີທາງໃນການຣະບາຍຄວາມຣະທົມທຸກທີ່ມີໃນຫົວໃຈ. ຄຳກອນຕອນນີ້ແມ່ນເພື່ອອະດີດໜຸ່ມທີ່ເຄີຍຮັກແທ້ ແຕ່ຜິດຫວັງ ແລະຮັກນັ້ນຍັງໝັ້ນຄົງ. ແດ່ເພື່ອນໆອະດີດໜຸ່ມນັກສຶກສາຊາຍທຸກໆຄົນທີ່ມີປະສົບການດັ່ງທີ່ໄດ້ກ່າວມາແລ້ວນັ້ນ.

## ຮັກຈາກໃຈຈິງຂອງອະດີດໜຸ່ມນັກສຶກສາ

ບັດນີ້ ຂ້າຂໍຂຽນຄຳເວົ້າ ເອົາໃຈອອກມາສູ່ ຟັງເນີ
ເປັນບົດຂຽນໃຫ້ຮູ້ ເປັນເລື້ອງໃຫ້ສວ່າງໃຈ
ຂໍຜູ້ອ່ານນັ້ນໄດ້ ພິຈານເບິ່ງໃຫ້ມັນຄັກ
ອາດຈະຕຳໃຈຕົນ ກໍໃຫ້ທົນຟັງໄວ້

ເປັນບົດກອນສອນໃຫ້ ຄົນເຮົາໃຫ້ຄຶດຮ່ຳ
ເລື້ອງຄວາມເຈັບປວດຊ້ຳ ກໍທົນໄດ້ເພາະຮັກກັນ
ອັນຄວາມຮັກແທ້ນັ້ນ ເຮົາຕ້ອງຮັບຄວາມຈິງ
ຈຶ່ງຣະບາຍເປັນກອນ ໃຫ້ຄ່ອຍຟັງເດີເຈົ້າ

ຕໍ່ໄປ ກໍຈະເປັນຄຳເວົ້າ ຂອງຊາຍຜູ້ເຄີຍຮັກ
ລາວໄດ້ພັດພາກຂ້າງ ໄກນ້ອງຜູ້ຮັກກັນ
ແຕ່ວ່າບາດນີ້ນັ້ນ ເພິ່ນໄດ້ພົບເຫັນກັນ ອີກນໍ
ຈຶ່ງມີຄວາມສຳພັນ ດັ່ງບັນຣະຍາຍໄວ້

ລາວວ່າ "ອ້າຍຊ່າງຄິດຮອດເຈົ້າ ເຊົ້າຄ່ຳຄະນຶງຫາ ນາງເອີຍ
ໄດ້ຍິນສຽງໂທມາ ກ່າວຈາທຸກແລງເຊົ້າ
ຈິດໃຈຊາຍແສນເສົ້າ ເວລາເຮົາເວົ້າສັ່ງ
ສຽງນາງມິດຈາກແລ້ວ ໃຈກໍຄ້ອຍ ຄິດຫ່ວງນາງ ແທ້ໃດ

| | | |
|---|---|---|
| | ຍິ່ງຄິດຍິ່ງຮັກເຈົ້າ | ເຊົ້າຄ່ຳກໍ່ຝັນເຫັນ ແພງເອີຍ |
| | ທາງກາງເວັນກາງຄືນ | ບໍ່ໄດ້ລືມຕົວເຈົ້າ |
| ນາງເອີຍ | ຄິດເຖິງຄາວເຮົາເວົ້າ | ຢູ່ເມືອງລາວຄາວກ່ອນ ເດນໍ |
| | ອ້າຍກໍຍິ່ງຮັກນ້ອງ | ຢາກມີເຈົ້າຢູ່ຮຽງ ອ້າຍເດ |
| | | |
| | ອຸກໃຈ ຮັກ-ບໍ່ໄດ້ | ຮຽງຮ່ວມນາງແພງ |
| | ອຸກໃຈ ຮັກ-ບໍ່ມີຄວາມຫວັງ | ໄດ້ແຕ່ຟັງສຽງເຈົ້າ |
| | ຈັກວ່າ ຈິດໃຈເຈົ້າ | ຈະເໝືອນຊາຍ ອ້າຍຢູ່ບໍ່? ນາງເອີຍ |
| | ຫລືວ່ານ້ອງຫລອກລໍ້ | ຕົວະຫລິ້ນໃຫ້ຫ່ວງນຳ ດອກລີ |
| | | |
| ແຕ່ກີ້ | ຄາວເຮົາພັດພາກບ້ານ | ອ້າຍຍັງຢູ່ສະບາຍໃຈ ນາງເອີຍ |
| | ຢູ່ໄດ້ສາມສິບປີ | ກໍບໍ່ມີຄວາມເສົ້າ |
| | ບາດວ່າມາເຫັນເຈົ້າ | ໃຈຄະນຶງຄຶດຮ່ຳ ອີກແລ້ວ |
| | ອ້າຍຢາກຕາຍໃຫ້ຊ້ຳ | ຄືຊິໄດ້ສວ່າງໃຈ ວ່ານາ |
| | | |
| ນາງເອີຍ | ຖ້າວ່າອ້າຍພາກນ້ອງ | ໜີຈາກເທື່ອທີສອງ ຄຳເອີຍ |
| | ໃຫ້ນ້ອງຈົດຈຳເອົາ | ບ່າວພີ່ຊາຍ ຄຳເວົ້າ |
| | ຢ່າສູ່ມີໃຈເສົ້າ | ເຫງົາໃຈໃຫ້ໄກຫ່າງ ໃດເນີ |
| | ຮັກນາງ-ຮັກບໍ່ໄດ້ | ມີ ແຕ່ໄຫ້ຢູ່ໃຈ ແທ້ແລ້ວ |
| | | |
| ຍາມນິ່ງ | ຄຶດຢາກຕາຍໃຫ້ຊ້ຳ | ໜີໄປຢູ່ເມືອງສະຫວັນ |
| ແຕ່ວ່າ | ຍັງຄິດເຖິງນວນນາງ | ຜູ້ທີ່ຊາຍຫວັງຊ້ອນ |
| ນາງເອີຍ | ຄິດມາຫລາຍມັນເສົ້າ | ເຫງົາໃຈຄິດຮອດອຸ່ນ |
| | ອ້າຍຢາກໜີໃຫ້ພົ້ນ | ຕາຍໜ້າພັດຫ່ວງຫລັງ ນ້ອງເອີຍ |
| | | |
| | ດຽວນີ້ອ້າຍບໍ່ຮູ້ | ວ່າຈະເຮັດແນວໃດ |
| | ລາງເທື່ອໃຈຖອຍໜີ | ລາງເທື່ອຫວັງ-ຢາກເຫັນນ້ອງ |
| | ລາງເທື່ອຍິນສຽງຕ້ອງ | ຫູຊາຍຄືວ່າມ່ວນ |
| | ບາດເຈົ້າມິດງຽບແລ້ວ | ກໍເຈັບຊ້ຳໃໝ່ມາ |

| | | |
|---|---|---|
| ນ້ອງຮັກ | ເອົາລະນໍຄາວນີ້ | ລະບາຍເບີກອົກຊາຍ |
| | ບັນຣະຍາຍຄວາມຮັກ | ໃຫ້ປະຈັກໃຈອ້າຍ |
| ນາງເອີຍ | ຮັກບໍ່ຫວັງຄອງໄດ້ | ອຸກໃຈແຕ່ຮ້ອງແອ່ວ |
| ແຕ່ວ່າ | ອ້າຍຈະຮັກນ້ອງແກ້ວ | ເຖິງເທົ້າຊົ່ວຊີວັນ ນ້ອງເອີຍ. |
| | | |
| ສາທຸ | ຂໍໃຫ້ອົງພຣະເຈົ້າ | ຜູ້ຍິ່ງໃຫຍ່ສູງສຸດ ພຣະອົງເອີຍ |
| ຂໍວອນ | ເທພຣະພອນລົງມາ | ສູ່ຄອບຄົວນາງນ້ອງ |
| ຂໍວອນ | ໃຫ້ພຣະອົງປົກປ້ອງ | ນວນນາງໃຫ້ສິດຊື່ນ |
| ທຸກວັນຄືນ | ຂໍໃຫ້ນາງພົບພໍ້ | ພຣະອົງເຈົ້າ ດັ່ງດຽວ ແມ່ທ້ອນ." |

ອ. ທອມອ່ອນ